ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ                    ເລກທີ 612 /ກຄສບ

ນະຄອນຫລວງວຽງຈັນ, ວັນທີ 11 ຕຸລາ 2023

## ແຈ້ງການ

ເຖິງ: ທ່ານ ຜູ້ອໍານວຍການ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ.

ເລື່ອງ: ການສົ່ງບົດລາຍງານປະຈໍາເດືອນ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສະບັບເລກທີ 975/ທຫລ ລົງວັນທີ 07 ທັນວາ 2022;
- ອີງຕາມ ຄໍາແນະນໍາກ່ຽວກັບຮູບແບບຂໍ້ມູນ ແລະ ການລາຍງານຂອງສະຖາບັນການເງິນທີ່ບໍ່ແມ່ນທະນາ ຄານ ສະບັບເລກທີ 119/ກຄສງ ລົງວັນທີ 12 ມີນາ 2021;
- ອີງຕາມ ແຈ້ງການ ຂອງກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສະບັບເລກທີ 686/ກຄສງ ລົງວັນທີ 28 ທັນວາ 2022.

ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ (ກຄສບ) ຂໍຖືເປັນກຽດແຈ້ງມາຍັງທ່ານ ❶ ຜູ້ອໍານວຍການ ❶ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ (ສກຈຮ), ❷ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສສງ), ❸ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ (ສກຈບ), ❹ ບໍລິສັດເຊົ່າສິນເຊື່ອ (ບຊສ) ແລະ ❺ ໂຮງຊວດຈໍາ (ຮຊຈ) ກ່ຽວກັບການຈັດຕັ້ງປະຕິບັດລະບອບການລາຍງານຮູບແບບໃໝ່, ໂດຍອີງຕາມແຈ້ງການສະບັບເລກທີເລກທີ 686/ກຄສງ, ລົງວັນທີ 28 ທັນວາ 2022 ແມ່ນໄດ້ກໍານົດໃຫ້ສະຖາບັນການເງິນທຸກຮູບແບບ ໃຫ້ຫັນປ່ຽນການລາຍງານເປັນຮູບແບບໃໝ່ ເລີ່ມແຕ່ປີ 2023 ເປັນຕົ້ນໄປຄື: ລາຍງານຮູບແບບເອເລັກໂຕນິກ (XML File ຫຼື JSON File) ພ້ອມທັງລາຍງານຮູບແບບເອ ກະສານ (PDF 12 Form), ຊຶ່ງຜ່ານການຕິດຕາມ ຜົນການຈັດຕັ້ງປະຕິບັດມາຮອດປະຈຸບັນເຫັນວ່າ ຍັງມີສະຖາບັນການເງິນຈໍານວນໜຶ່ງ ທີ່ບໍ່ສາມາດລາຍງານໃນຮູບແບບໃໝ່ໄດ້ ເນື່ອງຈາກສອງປັດໄຈທີ່ຄົງຄ້າງຄື: ❶ ໂປຣແກຣມບັນຊີທີ່ນໍາໃຊ້ ຍັງບໍ່ສາມາດພັດທະນາລະບົບລາຍງານຮູບແບບໃໝ່ໄດ້ສໍາເລັດ ແລະ ❷ ຂໍ້ມູນທີ່ປະກອບເຂົ້າໃນລາຍງານຮູບແບບໃໝ່ ແມ່ນຍັງບໍ່ທັນຄົບຖ້ວນ ແລະ ຖືກຕ້ອງຕາມມາດຖານໂຄງສ້າງທີ່ທາງ ກຄສບ ກໍານົດ, ຈາກບັນຫາດັ່ງກ່າວ ກຄສບ ຈຶ່ງໄດ້ແຈ້ງມາຍັງແຕ່ລະສະຖາບັນການເງິນປະຕິບັດດັ່ງນີ້:

1. ໃຫ້ສະຖາບັນການເງິນ ສກຈຮ, ສສງ, ສກຈບ, ບຊສ ແລະ ຮຊຈ: **ຮີບຮ້ອນປັບປຸງແກ້ໄຂຂໍ້ຄົງຄ້າງດັ່ງກ່າວໃຫ້ສໍາເລັດຊ້າສຸດ ບໍ່ໃຫ້ກາຍປີ 2023 ແລະ ເລີ່ມຈັດຕັ້ງປະຕິບັດຢ່າງເຕັມສ່ວນນັບແຕ່ປີ 2024 ເປັນຕົ້ນໄປ;**
2. ໃນຊ່ວງໄລຍະການປັບປຸງແກ້ໄຂຕາມທີ່ລະບຸໄວ້ໃນຂໍ້ໜຶ່ງນັ້ນ **ໃຫ້ສະຖາບັນການເງິນ ສືບຕໍ່ລາຍງານເປັນປົກກະຕິ ຕາມຮູບແບບເກົ່າຄື: (09 ແບບຟອມ ເວີຊັ້ນ 2020.3.11);**

3. ສຳລັບສະຖາບັນການເງິນທີ່ມີຄວາມພ້ອມລາຍງານໃນຮູບແບບໃໝ່ ແມ່ນໃຫ້ເລີ່ມ ແລະ ສືບຕໍ່ຈັດຕັ້ງປະຕິບັດການລາຍງານໃນຮູບແບບໃໝ່ໄປເລີຍ;
4. ຕໍ່ກັບຊ່ອງທາງການສົ່ງລາຍງານໃຫ້ແກ່ ທຫລ ໃນປະຈຸບັນນັ້ນ, ສຳລັບສະຖາບັນການເງິນ ທີ່ຕັ້ງຢູ່ໃນເຂດການຄຸ້ມຄອງຂອງ ກຄສບ (ນະຄອນຫຼວງວຽງຈັນ ແລະ ແຂວງ ວຽງຈັນ) ແມ່ນໃຫ້ສົ່ງເຂົ້າທາງກຸ່ມປະສານງານ (WhatsApp) ຂອງແຕ່ລະສະຖາບັນການເງິນທີ່ ກຄສບ ໄດ້ສ້າງໄວ້ໃຫ້, ສ່ວນສະຖາບັນການເງິນທີ່ຕັ້ງຢູ່ໃນເຂດການຄຸ້ມຄອງ ຂອງສາຂາ ທຫລ ປະຈຳພາກ ແມ່ນໃຫ້ປະຕິບັດຕາມການກຳນົດຂອງ ສາຂາ ທຫລ ປະຈຳພາກ, ໃນອະນາຄົດຫາກມີການປ່ຽນແປງຊ່ອງທາງ ແລະ ຂັ້ນຕອນວິທີການສົ່ງລາຍງານ ແມ່ນຈະແຈ້ງໃຫ້ຊາບຕາມແຕ່ລະໄລຍະ;
5. ນັບແຕ່ປີ 2024 ເປັນຕົ້ນໄປຫາກສະຖາບັນການເງິນ ບໍ່ສາມາດຈັດຕັ້ງປະຕິບັດການລາຍງານຮູບແບບໃໝ່ຕາມແຈ້ງການສະບັບນີ້, ກຄສບ ແລະ ສາຂາ ທຫລ ປະຈຳພາກ ຈະພິຈາລະນານຳໃຊ້ມາດຕະການຕາມລະບຽບການທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມ

ພູຂົງ ຈັນທະຈັກ